ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1264 /ອຄ.ຄພນ.

ນະຄອນຫຼວງວຽງຈັນ, ວັນທີ 27 JUN 2012

# ແຈ້ງການ

## ວ່າດ້ວຍ ກຳນົດລາຍການສິນຄ້າ ແລະ ການບໍລິການ ຄວບຄຸມລາຄາ ຂອງບັນດາຂະແໜງການກ່ຽວຂ້ອງ.

- ອີງຕາມ ດຳລັດ, ສະບັບເລກທີ 552/ນຍ, ລົງວັນທີ 23/12/2011, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ;
- ອີງຕາມ ດຳລັດ ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ, ເລກທີ 474/ນຍ, ລົງວັນທີ 18/11/2010;
- ອີງຕາມ ການປະສານສົມທົບ ແລະ ເອກະພາບກັບຂະແໜງການກ່ຽວຂ້ອງ.

ເພື່ອອຳນວຍຄວາມສະດວກໃນການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ແລະ ໃຫ້ສັງຄົມຮັບຮູ້ວ່າລາຄາສິນຄ້າ ແລະ ຄ່າບໍລິການໃດຂຶ້ນກັບການຄຸ້ມຄອງຂອງຂະແໜງການທີ່ກ່ຽວຂ້ອງໃດນັ້ນ,

**ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ ດັ່ງນີ້:**

1. ລາຍການສິນຄ້າ ແລະ ການບໍລິການຄວບຄຸມລາຄາ ທີ່ຂຶ້ນກັບການຄຸ້ມຄອງຂອງແຕ່ລະຂະແໜງການກ່ຽວຂ້ອງແມ່ນໄດ້ລະບຸໄວ້ໃນເອກະສານຊ້ອນທ້າຍ ບັນຊີ "ກ" ຂອງແຈ້ງການສະບັບນີ້;
2. ລາຍການສິນຄ້າ ແລະ ການບໍລິການຄວບຄຸມລາຄາ ໝາຍເຖິງ ລາຍການສິນຄ້າທີ່ມີຄວາມອ່ອນໄຫວສູງ, ມີຄວາມຈຳເປັນ ແລະ ມີຜົນກະທົບໄວຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ແລະ ການພັດທະນາເສດຖະກິດ-ສັງຄົມ;
3. ລາຍການສິນຄ້າ ແລະ ການບໍລິການຄວບຄຸມລາຄາ ຕາມ ບັນຊີ "ກ", ບັນດາຂະແໜງການກ່ຽວຂ້ອງ ສາມາດເພີ່ມ ຫຼື ຫຼຸດ ຕາມຄວາມເໝາະສົມ ແລະ ຄວາມຈຳເປັນໃນແຕ່ລະໄລຍະ;
4. ການ ເພີ່ມ ຫຼື ຫຼຸດ ບັນຊີລາຍການສິນຄ້າ ແລະ ການບໍລິການຄວບຄຸມລາຄາ ຕາມ ບັນຊີ "ກ" ແມ່ນຕ້ອງໄດ້ຮັບອະນຸຍາດກ່ອນ;
5. ອີງການຄຸ້ມຄອງລາຄາຂອງແຕ່ລະຂະແໜງການ ແລະ ແຕ່ລະຂັ້ນ ຕ້ອງເປັນເຈົ້າການເຜີຍແຜ່, ແນະນຳ, ຕິດຕາມ, ກວດກາ ແລະ ຈັດຕັ້ງປະຕິບັດການຄຸ້ມຄອງລາຄາຕາມທີ່ໄດ້ກຳນົດໄວ້ໃນແຈ້ງການສະບັບນີ້;
6. ລາຍການສິນຄ້າ ແລະ ການບໍລິການ ທີ່ບໍ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ ບັນຊີ "ກ" ຂອງແຈ້ງການສະບັບນີ້ແມ່ນບໍ່ນອນຢູ່ໃນບັນຊີຄວບຄຸມລາຄາ, ແຕ່ອາດຢູ່ໃນລາຍການຕິດຕາມ

ການເໜັງຕີງຂອງລາຄາ, ຊຶ່ງສາມາດເອົາເຂົ້າໃນລາຍການຄວບຄຸມລາຄາໄດ້ໃນກໍລະນີຈຳເປັນ ຕາມດຳລັດຂອງນາຍົກລັດຖະມົນຕີ, ເລກທີ 474/ນຍ, ລົງວັນທີ 18/11/2010;

7. ແຈ້ງມາຍັງທຸກພາກສ່ວນທີ່ກ່ຽວຂ້ອງ, ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດແຈ້ງການສະບັບນີ້ຕາມພາລະບົດບາດຂອງໃຜລາວຢ່າງເຂັ້ມງວດ;

8. ແຈ້ງການສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການ

ກະຊວງອຸດສາຫະກຳ ແລະ ການຄ້າ,

ກະຊວງອຸດສາຫະກຳ ແລະ ການຄ້າ

ລັດຖະມົນຕີ

ດຣ. ນາມ ວິຍະເກດ

## ບັນຊີ "ກ"

## ລາຍການສິນຄ້າ ແລະ ການບໍລິການ ຄວບຄຸມລາຄາ ຂອງບັນດາຂະແໜງການກ່ຽວຂ້ອງ

| ລຳດັບ | ລາຍການສິນຄ້າ ແລະ ບໍລິການ | ລະຫັດສິນຄ້າ/ການບໍລິການ | ເຄື່ອງມືນິຕິກຳນຳໃຊ້ (ລະບຽບການ) | ອົງການຮັບຜິດຊອບ | ໝາຍເຫດ |
|---|---|---|---|---|---|
| 1 | ຂະແໜງອຸດສາຫະກຳ ແລະ ການຄ້າ | | | | |
| I. | ສິນຄ້າ | | | | |
| ກ | ປະເພດນ້ຳມັນເຊື້ອໄຟ | 27.10 | ຂໍ້ຕົກລົງ (1785/ອຄ.ຄພນ-7/9/09) | ກົມການຄ້າພາຍໃນ | |
| 1 | ແອັດຊັງພິເສດ | 2710.11 | ---"--- | ---"--- | |
| 2 | ແອັດຊັງທຳມະດາ | 2710.11 | ---"--- | ---"--- | |
| 3 | ກາຊວນ | 2710.19.72 | ຂໍ້ຕົກລົງ (1785/ອຄ.ຄພນ-7/9/09) | ---"--- | |
| ຂ | ປະເພດເຂົ້າ | 10.06 | ຂໍ້ຕົກລົງ (96/ນຍ-23/9/08) | ---"--- | |
| 4 | ເຂົ້າເປືອກໜຽວ | 1006.10.00 | ---"--- | ---"--- | |
| 5 | ເຂົ້າເປືອກຈ້າວ | 1006.10.00 | ---"--- | ---"--- | |
| 6 | ເຂົ້າສານໜຽວ (ປະເພດ 1) | 1006.30.30 | ---"--- | ---"--- | |
| 7 | ເຂົ້າສານໜຽວ (ປະເພດ 2) | 1006.30.30 | ---"--- | ---"--- | |
| 8 | ເຂົ້າສານຈ້າວ (ປະເພດ 1) | 1006.30.20 | ---"--- | ---"--- | |
| 9 | ເຂົ້າສານຈ້າວ (ປະເພດ 2) | 1006.30.20 | ຂໍ້ຕົກລົງ (96/ນຍ-23/9/08) | ---"--- | |
| ຄ | ປະເພດຊີ້ນ | | | | |
| 10 | ຊີ້ນໝູ ປະເພດ 1 | 2.03 | ຄຳສັ່ງແນະນຳ (0312/ອຄ.ຄພນ-13/2/12)+479/ນຍ | ---"--- | ✓ |
| 11 | ຊີ້ນໝູ ປະເພດ 2 | 2.03 | ---"--- | ---"--- | |
| 12 | ຊີ້ນງົວ ປະເພດ 1 | 2.01 | ---"--- | ---"--- | |
| 13 | ຊີ້ນງົວ ປະເພດ 2 | 2.01 | ຄຳສັ່ງແນະນຳ (0312/ອຄ.ຄພນ-13/2/12) | ---"--- | |
| ງ | ປະເພດປານິນ | I | | I | |
| 14 | ປານິນ | 0301.92.01 | ຄຳສັ່ງແນະນຳ (0312/ອຄ.ຄພນ-13/2/12) | ກົມການຄ້າພາຍໃນ | |
| | ລວມ: 4 ປະເພດ, 14 ລາຍການສິນຄ້າ | | | | |

| | | | | | |
|---|---|---|---|---|---|
| 4 | ຂະແໜງພະລັງງານໄຟຟ້າ ແລະ ບໍ່ແຮ່ | | | | |
| I. | ການບໍລິການ | | | | |
| 1 | ຄ່າໄຟຟ້າ | | ແຈ້ງການ, ເລກທີ 484/ຟປລ-28/6/05. | ລັດວິສາຫະກິດໄຟຟ້າລາວ | |
| | ລວມ: 01 ລາຍການບໍລິການ | | | | |
| 5 | ຂະແໜງກະສິກຳ ແລະ ປ່າໄມ້ | | | | |
| I. | ສິນຄ້າ | | | | |
| 1 | ແນວພັນ | | ກົດລະບຽບ ວ່າດ້ວຍການຄຸ້ມຄອງນຳ ໃຊ້ແນວພັນ ແລະ ເມັດພັນພືດ ສຳລັບ ການປູກຝັງ ໃນ ສປປ ລາວ, ເລກທີ 0719/ກປ-3/12/97. | ກົມປູກຝັງ | |
| 2 | ຝຸ່ນວິທະຍາສາດ | | ກົດລະບຽບ ວ່າດ້ວຍການຄຸ້ມຄອງນຳໃຊ້ຝຸ່ນ ສຳລັບ ການປູກຝັງ, ເລກທີ 1503/ກປ-29/11/00. | ---"--- | |
| 3 | ຝຸ່ນຊີວະພາບ | | ກົດລະບຽບ ວ່າດ້ວຍການຄຸ້ມຄອງນຳ ໃຊ້ຝຸ່ນ ສຳລັບ ການປູກຝັງ, ເລກທີ 1503/ກປ-29/11/01. | ---"--- | |
| 4 | ຢາປາບສັດຕູພືດ | | ຂໍ້ຕົກລົງຂອງ ລມຕ ວ່າດ້ວຍການຄຸ້ມຄອງຢາປາບ ສັດຕູພືດ ໃນ ສປປ ລາວ, ເລກທີ 2860/ກປ-11/6/10 | ---"--- | |
| 5 | ໝວດລູກໄກ່ | | | ກົມລ້ຽງສັດ ແລະ ການປະມົງ | |
| 6 | ໝວດລູກໝູ | | | ---"--- | |
| 7 | ໝວດລູກປາ | | | ---"--- | |
| 8 | ໝວດອາຫານໄກ່-ເປັດ | | | ---"--- | |
| 9 | ໝວດອາຫານໝູ | | | ---"--- | |
| 10 | ໝວດອາຫານປາ | | | ກົມລ້ຽງສັດ ແລະ ການປະມົງ | |
| | ລວມ: 10 ລາຍການສິນຄ້າ | | | | |

| | | | | | |
|---|---|---|---|---|---|
| 2 | ຂະແໜງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ | | | | |
| I | ການບໍລິການ | | | | |
| 1 | ຄ່າໂທລະສັບຕັ້ງໂຕະ | | ຂໍ້ຕົກລົງ 993/ສນຍ.ອປທ 16/6/2011 | ກົມໂທລະຄົມ | |
| 2 | ຄ່າໂທລະສັບມືຖືແບບຕັ້ງໂຕະ | | ---"--- | ---"--- | |
| 3 | ຄ່າໂທລະສັບມືຖືລາຍເດືອນ | | ---"--- | ---"--- | |
| 4 | ຄ່າໂທລະສັບມືຖືແບບຕື່ມເງິນ | | ---"--- | ---"--- | |
| 5 | ຄ່າສົ່ງ ແລະ ຮັບຂໍ້ຄວາມສັ້ນ | | ---"--- | ---"--- | |
| 6 | ຄ່າຜ່ານ Gateway | | ---"--- | ---"--- | |
| 7 | ຄ່າເຊື່ອມຕໍ່ | | ຂໍ້ຕົກລົງ 993/ສນຍ.ອປທ 16/6/2011 | ກົມໂທລະຄົມ | |
| | ລວມ: 7 ລາຍການບໍລິການ | | | | |
| 3 | ຂະແໜງໂຍທາທິການ ແລະ ຂົນສົ່ງ | | | | |
| I. | ການບໍລິການ | | | | |
| 1 | ຄ່ານ້ຳປະປາ | | ລາຄານ້ຳປະປາທີ່ໄດ້ອະນຸມັດແລ້ວ ປີ 2008-10. | ຫ້ອງການດັດສົມນ້ຳປະປາ | |
| 2 | ຄ່າຂົນສົ່ງໂດຍສານດ້ວຍ ລົດແທັກຊີມີເຕີ | | ມາດຕະຖານເຕັກນິກ ແທັກຊີ 280/ກຂສ-4/5/94. | ກົມຂົນສົ່ງ | |
| 3 | ຄ່າຂົນສົ່ງໂດຍສານລະຫວ່າງແຂວງຫາແຂວງ (ທີ່ມີຊາຍແດນຕິດກັນ), ແຂວງຫາແຂວງ (ຜ່ານຫຼາຍແຂວງ). | | ກົດລະບຽບວ່າດ້ວຍການຂົນສົ່ງ ໂດຍສານທາງລົດ ຍົນ, ເລກທີ 4047/ກຊຂປ-26/10/87. | ---"--- | |
| 4 | ຄ່າຂົນສົ່ງໂດຍສານພາຍໃນ ເທດສະບານ ແລະ ການຂົນສົ່ງພາຍໃນແຂວງ | | ກົດລະບຽບວ່າດ້ວຍການຂົນສົ່ງ ໂດຍສານທາງລົດ ຍົນ, ເລກທີ 4047/ກຊຂປ-26/10/87. | ---"--- | |
| 5 | ຄ່າບໍລິການຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ | | ກົດໝາຍການບິນພົນລະເຮືອນ ແລະ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງຕົວແທນຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ.<br>- ຕາຕະລາງລາຄາປີ້ເຮືອບິນ ເສັ້ນທາງພາຍໃນປະເທດ, ເລກທີ 002/QT/11. | ລັດວິສາຫະກິດການບິນລາວ | |

# ວຽກຄຸ້ມຄອງສິນຄ້າ ແລະ ຄ່າບໍລິການ

## ( ລາຍລະອຽດຂອງແຕ່ລະຊະນິດສິນຄ້າ )